ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********************

ອົງການໄອຍະການປະຊາຊົນສູງສຸດ

ຫ້ອງການ

ພະແນກຍຸຕິທຳ [illegible] ຫຼວງພະບາງ
ຂະແໜງ [illegible] ຕິດຕາມຂອງສານ
ຂາເຂົ້າ
ເລກທີ 02
ລົງວັນທີ 16/12/2019

ເລກທີ 955 /ຫກ

ນະຄອນຫຼວງວຽງຈັນ, ລົງວັນທີ 28 ພະຈິກ 2019

# ໜັງສືນຳສົ່ງ

**ເຖິງ: ຫົວໜ້າ ພະແນກຍຸຕິທຳ ແຂວງຫຼວງພະບາງ**

| ລ/ດ | ເນື້ອໃນເອກະສານ | ໝາຍເຫດ |
|---|---|---|
| 01<br><br>02 | ໄດ້ສົ່ງ: ສຳນວນຄະດີແພ່ງ, ສະບັບເລກທີ 116/ອອປສ<br>ລົງວັນທີ 21 ສິງຫາ 2018.<br>ໄດ້ສົ່ງ: ຄຳຕົກລົງບໍ່ຮື້ຟື້ນຄະດີ<br>ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ , ສະບັບເລກທີ 107/ອອປສ,<br>ລົງວັນທີ 27 ພະຈິກ 2019.<br>ລະຫວ່າງ<br>ທ້າວ ເພັດຈຳພອນ ຂຸນດາລາ .......................................... ໂຈດ.<br>ນາງ ບຸນທັນ ..................................................... ຈຳເລີຍ.<br><br>ກ່ຽວເລື່ອງ: ທວງເອົາເງິນຄືນ. | |

**ເຊັນແທນ ຫົວໜ້າຫ້ອງການ**

ອົງການໄອຍະການປະຊາຊົນສູງສຸດ
ຫ້ອງການ

ບົວສາ ສຸວັນທອງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ອົງການໄອຍະການປະຊາຊົນສູງສຸດ

ເລກທີ...107.../ອອປສ
ນະຄອນຫຼວງວຽງຈັນ, ວັນທີ...27/11.../2019

# ຄໍາຕົກລົງບໍ່ຮື້ຟື້ນຄະດີ

- ອີງຕາມ ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2017;
- ອີງຕາມ ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012;
- ອີງຕາມ ຄໍາຮ້ອງຂໍຮື້ຟື້ນຄະດີຂອງ ນາງ ບຸນທັນ (ຈໍາເລີຍ) ຕາມຂາເຂົ້າ ສະບັບເລກທີ 116/ອອປສ, ລົງວັນທີ 21 ສິງຫາ 2018 ຂອງອົງການໄອຍະການປະຊາຊົນສູງສຸດ;

**ລະຫວ່າງ:**

ທ້າວ ເພັດຈໍາພອນ ຊຸມດາລາ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ 02, ບ້ານ ຊຽງທອງ, ນະຄອນຫຼວງພະບາງ, ແຂວງ ຫຼວງພະບາງ..........................................................................ໂຈດ.

ທ້າວ ບຸນທະວີ ຄໍາລະຍົກ............................................................(ທະນາຍຄວາມຄວາມຝ່າຍໂຈດ).

ນາງ ບຸນທັນ, ອາຍຸ 58 ປີ, ສັນຊາດ ລາວ, ອາຊີບ ຄ້າຂາຍ, ປັດຈຸບັນຢູ່ໜ່ວຍ 05, ບ້ານ ສັງຄະໂລກ, ນະຄອນ ຫຼວງພະບາງ, ແຂວງ ຫຼວງພະບາງ.............................................................................................ຈໍາເລີຍ.

**ກ່ຽວເລື່ອງ**: ທວງເອົາເງິນຄືນ.

**ເນື້ອຄະດີ**

ຕາມຄໍາຮ້ອງຟ້ອງ ສະບັບລົງວັນທີ 20 ພະຈິກ 2015 ຂອງ ທ້າວ ເພັດຈໍາພອນ (ໂຈດ) ອ້າງວ່າ: ໃນເບື້ອງຕົ້ນຕົນ ແລະ ທ້າວ ແສງວົງຈິດ ຢ່າງວິໄລ ໄດ້ມາຊື້ທີ່ດິນນໍາ ນາງ ບຸນທັນ (ຈໍາເລີຍ) ຈໍານວນ 02 ຕອນຄື: ຕອນທີໜຶ່ງມີເນື້ອທີ່ 263 ຕາແມັດ ຕາມໃບຕາດິນ ສະບັບເລກທີ 217, ລົງວັນທີ 12 ກັນຍາ 2003 ອອກຊື່ ນາງ ບຸນທັນ (ຈໍາເລີຍ) ແລະ ທີ່ດິນຕອນທີສອງມີເນື້ອທີ່ 01 ເຮັກຕາ 5.868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ອອກຊື່ ນາງ ບຸນທັນ (ຈໍາເລີຍ) ທີ່ຕັ້ງຢູ່ ບ້ານ ສັງຄະໂລກ, ນະຄອນຫຼວງພະບາງ, ແຂວງ ຫຼວງພະບາງ ໃນມູນຄ່າ 9.600.000 ບາດ (ເກົ້າລ້ານຫົກແສນບາດ) ຕາມສັນຍາຊື້ຂາຍທີ່ດິນ ສະບັບເລກທີ 01/ສດລ, ລົງວັນທີ 08 ມັງກອນ 2012 ພາຍຫຼັງທີ່ພວກຕົນໄດ້ຈ່າຍເງິນຄ່າທີ່ດິນໃຫ້ ນາງ ບຸນທັນ (ຈໍາເລີຍ) ໝົດແລ້ວ, ນາງ ບຸນທັນ ໄດ້ໂອນໃບຕາດິນ ອອກຊື່ ທ້າວ ເພັດຈໍາພອນ ຊຸມດາລາ + ທ້າວ ແສງວິຈິດ ຢ່າງວິໄລ ຈາກນັ້ນ ພວກຕົນຈຶ່ງໄດ້ສະເໜີໃຫ້ພະນັກງານທີ່ດິນ ລົງໄປວັດແທກທີ່ດິນຂອບເຂດແດນຂອງດິນຄືນໃໝ່ ຈຶ່ງຮູ້ວ່າເນື້ອທີ່ດິນຕອນທີສອງ ຕາມໃບຕາດິນ ເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ຕົວຈິງພຽງແຕ່ 5.868 ຕາແມັດ ຕາມໃບຢັ້ງຢືນ ສະບັບເລກທີ 246/ທຊສ.ຫຼບ, ລົງວັນທີ 11 ເມສາ 2015 ຂອງຫົວໜ້າຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງຫຼວງພະບາງ ຫຼັງຈາກນັ້ນ ພວກຕົນກໍໄດ້ເຂົ້າໄປຫາ ນາງ ບຸນທັນ (ຈໍາເລີຍ) ສົ່ງເງິນຄ່າທີ່ດິນເນື້ອທີ່ ຈໍານວນ 01 ເຮັກຕາ ທີ່ຂາດຫາຍໄປນັ້ນຄິດໄລ່ ເປັນເງິນ ຈໍານວນ 5.952.055 ບາດ (ຫ້າລ້ານເກົ້າແສນຫ້າໝື່ນສອງພັນຫ້າສິບຫ້າບາດ) ຄືນໃຫ້ແກ່ພວກຕົນ, ແຕ່ ນາງ ບຸນທັນ ປະຕິເສດບໍ່ຍອມສົ່ງເງິນຄືນໃຫ້ແກ່ພວກຕົນ ເມື່ອເຫດການເປັນແນວນັ້ນ ພວກຕົນຈຶ່ງໄດ້ຂຽນຄໍາຮ້ອງຟ້ອງມາຍັງ ສານປະຊາຊົນແຂວງ ຫຼວງພະບາງ ເພື່ອທວງໃຫ້ ນາງ ບຸນທັນ (ຈໍາເລີຍ) ສົ່ງເງິນຄ່າດິນ ຈໍານວນ 5.952.055 ບາດ (ຫ້າລ້ານເກົ້າແສນຫ້າໝື່ນສອງພັນຫ້າສິບຫ້າບາດ) ຄືນໃຫ້ແກ່ພວກຕົນ.

ຕາມຄຳແກ້ຟ້ອງ ສະບັບລົງວັນທີ 10 ທັນວາ 2015 ຂອງ ນາງ ບຸນທັນ (ຈຳເລີຍ) ອ້າງວ່າ: ຕົນແມ່ນຮັບຮູ້ວ່າໄດ້ຂາຍທີ່ດິນ ຈຳນວນ 02 ຕອນ ໃຫ້ແກ່ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແທ້, ສ່ວນການທີ່ ທ້າວ ເພັດຈຳພອນ ຊຸນດາລາ ໄດ້ຮ້ອງຟ້ອງຕົນຂຶ້ນມາຍັງສານປະຊາຊົນແຂວງ ຫຼວງພະບາງ ເພື່ອທວງໃຫ້ຕົນສົ່ງເງິນຄ່າທີ່ດິນຄືນ ຈຳນວນ 5.952.055 ບາດ (ຫ້າລ້ານເກົ້າແສນຫ້າໝື່ນສອງພັນຫ້າສິບຫ້າບາດ) ຊຶ່ງໄດ້ອ້າງວ່າ ທີ່ດິນຕອນທີສອງ ຕາມໃບຕາດິນເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ດິນຕົວຈິງພຽງແຕ່ 5.868 ຕາແມັດ ຂາດຫາຍໄປ 01 ເຮັກຕາ ນັ້ນຕົນແມ່ນບໍ່ຮັບຮູ້ເພາະວ່າໃບຕາດິນທັງ 02 ສະບັບນັ້ນ ເປັນໃບຕາດິນແຂບຄຳ ຊຶ່ງແມ່ນອົງການລັດກໍຄືຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນເປັນຜູ້ອອກໃຫ້, ກ່ອນຈະມີການຊື້-ຂາຍ ຜູ້ຊື້ກໍໄດ້ໄປກວດກາຂອບເຂດຂອງທີ່ດິນຕົວຈິງແລ້ວ ແລະ ຕິດກັບທີ່ດິນຂອງໃຜແດ່ ທ້າວ ເພັດຈຳພອນ ຊຸນດາລາ ກໍຮັບຮູ້ ແລະ ເຫັນທີ່ດິນຕົວຈິງແລ້ວ ເພາະວ່າການຂາຍທີ່ດິນນັ້ນແມ່ນຂາຍຍົກ (ຂາຍທັງສອງຕອນພ້ອມກັນ) ໂດຍບໍ່ໄດ້ຂາຍເປັນຕາແມັດ ຖ້າວ່າເນື້ອທີ່ດິນຫາກບໍ່ຄົບຕາມທີ່ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ກ່າວອ້າງມານັ້ນ ຕົນກໍຈະຂາຍທີ່ດິນທັງສອງຕອນນັ້ນ ໃນລາຄາ 9.600.000 ບາດ (ເກົ້າລ້ານຫົກແສນບາດ) ຄືເກົ່າ ດັ່ງນັ້ນ ຕົນຈະບໍ່ຂໍສົ່ງເງິນຄ່າທີ່ດິນຄືນ ຈຳນວນ 5.952.055 ບາດ (ຫ້າລ້ານເກົ້າແສນຫ້າໝື່ນສອງພັນຫ້າສິບຫ້າບາດ) ນັ້ນເປັນການຄິດໄລ່ເອົາເອງໂດຍຄິດໄລ່ເປັນຕາແມັດ ຕົນແມ່ນຮັບຮູ້ ສະນັ້ນ ຕົນຈຶ່ງໄດ້ສະເໜີໃຫ້ສານປະຊາຊົນແຂວງ ຫຼວງພະບາງ ພິຈາລະນາຕັດສິນໃຫ້ຄວາມເປັນທຳແກ່ຕົນດ້ວຍ ເນື່ອງຈາກວ່າ ການຊື້-ຂາຍ ລະຫວ່າງ ຕົນກັບ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແມ່ນເຮັດຂຶ້ນດ້ວຍຄວາມບໍລິສຸດໃຈຂອງທັງສອງຝ່າຍໂດຍຜ່ານອຳນາດການປົກຄອງບ້ານທຸກຂັ້ນ ແລະ ຖືກຕ້ອງຕາມຫຼັກການຂອງກົດໝາຍທຸກຢ່າງ ໂດຍຜ່ານທີ່ດິນ ແລະ ທະບຽນສານ, ຕົນຈະບໍ່ຍອມສົ່ງເງິນຄືນໃຫ້ແກ່ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ເດັດຂາດ.

**ຮູບຄະດີ**

ສານປະຊາຊົນຂັ້ນຕົ້ນ ແຂວງຫຼວງພະບາງ ໄດ້ລົງຄຳຕັດສິນ ສະບັບເລກທີ 012/ຂຕ.ພ, ລົງວັນທີ 14 ພະຈິກ 2016 ບອກວ່າ ຄຳຮ້ອງຟ້ອງ ສະບັບລົງວັນທີ 20 ພະຈິກ 2015 ຂອງ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ມີເຫດຜົນບາງສ່ວນ ສານຈຶ່ງນຳມາພິຈາລະນາ, ຄຳແກ້ຟ້ອງຂອງ ນາງ ບຸນທັນ (ຈຳເລີຍ) ສະບັບລົງວັນທີ 10 ທັນວາ 2015 ບໍ່ມີເຫດຜົນ ສານຈຶ່ງບໍ່ນຳມາພິຈາລະນາໃຫ້ ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າທີ່ດິນ ຈຳນວນ 5.951.273 ບາດ (ຫ້າລ້ານເກົ້າແສນຫ້າໝື່ນໜຶ່ງພັນສອງຮ້ອຍເຈັດສິບສາມບາດ) ຄືນໃຫ້ແກ່ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ), ຖ້າວ່າ ນາງ ບຸນທັນ (ຈຳເລີຍ) ບໍ່ມີຄວາມສາມາດໃຊ້ແທນເງິນ ຈຳນວນ 5.951.273 ບາດ (ຫ້າລ້ານເກົ້າແສນຫ້າໝື່ນໜຶ່ງພັນສອງຮ້ອຍເຈັດສິບສາມບາດ) ໃຫ້ແກ່ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແມ່ນໃຫ້ປະກາດຂາຍທີ່ດິນພ້ອມດ້ວຍເຮືອນ ແລະ ໃຫ້ນຳເອົາເງິນຢູ່ເລກບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງ ທີ່ອອກຊື່ ນາງ ບຸນທັນ (ຈຳເລີຍ) ຕາມຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕພ, ລົງວັນທີ 10 ສິງຫາ 2016 ມາໃຊ້ແທນໃຫ້ແກ່ໂຈດຈົນຄົບຕາມ ຈຳນວນ 5.951.273 ບາດ (ຫ້າລ້ານເກົ້າແສນຫ້າໝື່ນໜຶ່ງພັນສອງຮ້ອຍເຈັດສິບສາມບາດ) ແຕ່ຖ້າຫາກວ່າຍັງບໍ່ພໍເປັນເງິນຈຳນວນເທົ່າໃດແມ່ນໃຫ້ ນາງ ບຸນທັນ (ຈຳເລີຍ) ຊອກມາໃຊ້ແທນໃຫ້ໂຈດຄົບຕາມຈຳນວນ ແຕ່ຖ້າຫາກວ່າເຫຼືອເປັນເງິນຈຳນວນເທົ່າໃດ ແມ່ນໃຫ້ສົ່ງຄືນໃຫ້ແກ່ ນາງ ບຸນທັນ (ຈຳເລີຍ), ໃຫ້ ນາງ ບຸນທັນ (ຈຳເລີຍ) ເສຍເງິນຄ່າອາກອນໃຫ້ແກ່ລັດ ຈຳນວນ 11.025 ບາດ (ໜຶ່ງໝື່ນໜຶ່ງພັນຊາວຫ້າບາດ) ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ໃນເວລາປະຕິບັດຄຳຕັດສິນຂອງສານ, ໃຫ້ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ເສຍເງິນຄ່າອາກອນລັດ ຈຳນວນ 15 ບາດ (ສິບຫ້າບາດ), ໃຫ້ ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າວິຊາການລົງກວດກາທີ່ດິນ ຈຳນວນ 1.200.000 ກີບ (ໜຶ່ງລ້ານສອງແສນກີບ) ຄືນໃຫ້ແກ່ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ), ໃຫ້ ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າວິຊາການລົງກວດກາອາຍັດທີ່ດິນ ແລະ ເຮືອນ ຈຳນວນ 2.000.000 ກີບ (ສອງລ້ານກີບ) ຄືນໃຫ້ແກ່ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ).

ຕໍ່ຄຳຕັດສິນດັ່ງກ່າວ ນາງ ບຸນທັນ (ຈຳເລີຍ) ບໍ່ພໍໃຈໄດ້ຂໍອຸທອນ ຫາສານປະຊາຊົນພາກເໜືອ ຂັ້ນອຸທອນ.

ສານປະຊາຊົນພາກເໜືອ ຂັ້ນອຸທອນໄດ້ລົງຄຳພິພາກສາ ສະບັບເລກທີ 005/ອທພ, ລົງວັນທີ 31 ມີນາ 2017 ບອກວ່າ ປ່ຽນແປງຄຳຕັດສິນ ສະບັບເລກທີ 012/ຂຕ.ພ, ລົງວັນທີ 14 ພະຈິກ 2016 ຂອງສານປະຊາຊົນຂັ້ນຕົ້ນແຂວງ

ຫຼວງພະບາງ ບາງສ່ວນ ໃຫ້ ທ້າວ ເພັດຈຳພອນ (ໂຈດ) ເສຍອາກອນຂອງລັດ 2% ຂອງມູນຄ່າ 782 ບາດ (ເຈັດຮ້ອຍແປດສິບສອງບາດ) ທີ່ຮ້ອງຟ້ອງເກີນ ແລະ ໃຫ້ຈຳເລີຍເສຍອາກອນຂອງລັດ 2% ຂອງມູນຄ່າ ຈຳນວນ 5.951.273 ບາດ (ຫ້າລ້ານເກົ້າແສນຫ້າໝື່ນໜຶ່ງພັນສອງຮ້ອຍເຈັດສິບສາມບາດ) ທີ່ເສຍຄະດີໂດຍໃຫ້ເສຍເປັນເງິນກີບ ສ່ວນການຄິດໄລ່ຕົວຈິງແມ່ນມອບໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ເປັນຜູ້ຄິດໄລ່ໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ປ່ຽນແປງພາກດ້ວຍເຫດນີ້ໃຫ້ກົງກັບພາກວິນິດໄສ ບອກວ່າ ໃຫ້ລົບລ້າງສັນຍາຊື້-ຂາຍ ສະບັບເລກທີ 01/ສຄລ, ລົງວັນທີ 08 ມັງກອນ 2012 ບາງສ່ວນ ລົບລ້າງໃນສ່ວນທີ່ເປັນໂມຄະຄື: ເນື້ອທີ່ດິນ 01 ເຮັກຕາ ເທົ່າກັບ 10.000 ຕາແມັດ ຖິ້ມພ້ອມທັງລົບລ້າງໃບຕາດິນ ເລກທີ 223, ລົງວັນທີ 07 ກຸມພາ 2014 ມີເນື້ອທີ່ 01 ເຮັກຕາ 5.868 ຕາແມັດ ອອກຊື່ທ້າວ ເພັດຈຳພອນ (ໂຈດ) ແລະ ທ້າວ ແສງວົງຈິດ (ບຸກຄົນທີສາມ) ຖິ້ມ ແລ້ວມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ ອອກໃບຕາດິນໃໝ່ທີ່ມີເນື້ອທີ່ 5.868 ຕາແມັດ ໃຫ້ແກ່ ທ້າວ ເພັດຈຳພອນ (ໂຈດ) ແລະ ທ້າວ ແສງວົງຈິດ (ບຸກຄົນທີສາມ) ນອກນັ້ນແມ່ນຢັ້ງຢືນເອົາຕາມຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນແຂວງຫຼວງພະບາງ ທັງໝົດ.

ຕໍ່ຄຳພິພາກສາດັ່ງກ່າວ ນາງ ບຸນທັນ (ຈຳເລີຍ) ບໍ່ພໍໃຈຈຶ່ງໄດ້ຂຽນຄຳຮ້ອງຂໍລົບລ້າງ ຫາສານປະຊາຊົນສູງສຸດ ຂັ້ນລົບລ້າງ.

ສານປະຊາຊົນສູງສຸດ ຂັ້ນລົບລ້າງ ໄດ້ລົງຄຳພິພາກສາ ສະບັບເລກທີ 63/ລລ.ພ, ລົງວັນທີ 25 ຕຸລາ 2017 ບອກວ່າ ຍົກເລີກຄຳຮ້ອງຂໍລົບລ້າງສະບັບດັ່ງກ່າວຖິ້ມ ແລ້ວຢັ້ງຢືນເອົາຕາມ ຄຳພິພາກສາ ສະບັບເລກທີ 005/ອທ.ພ, ລົງວັນທີ 31 ມີນາ 2017 ຂອງສານປະຊາຊົນພາກເໜືອຂັ້ນອຸທອນ ທັງໝົດ.

ພາຍຫຼັງທີ່ສານປະຊາຊົນສູງສຸດ ໄດ້ພິພາກສາແລ້ວ ນາງ ບຸນທັນ (ຈຳເລີຍ) ຍັງບໍ່ພໍໃຈຈຶ່ງໄດ້ຂຽນຄຳຮ້ອງຂໍຮື້ຟື້ນຄະດີ ຕາມຂາເຂົ້າ ສະບັບເລກທີ 116/ອອປສ, ລົງວັນທີ 21 ສິງຫາ 2018 ຂອງອົງການໄອຍະການປະຊາຊົນສູງສຸດ ໂດຍອ້າງເຫດຜົນວ່າ: ສັນຍາຊື້-ຂາຍທີ່ດິນ ສະບັບເລກທີ 01, ລົງວັນທີ 08 ມັງກອນ 2012 ແມ່ນຕົນຂາຍຍົກທັງ 02 ຕອນ ໃນລາຄາ 9.600.000 ບາດ (ເກົ້າລ້ານຫົກແສນບາດ) ບໍ່ແມ່ນຂາຍເປັນແມັດກະເລ້ ຫຼື ຕາແມັດ ກ່ອນຈະເຊັນສັນຍາຊື້-ຂາຍຕົນກໍພາໂຈດໄປເບິ່ງທີ່ດິນຕົວຈິງ, ໃບຕາດິນ 223, ລົງວັນທີ 07 ກຸມພາ 2014 ມີເນື້ອທີ່ 1 ເຮັກຕາ 5.868 ຕາແມັດແມ່ນທາງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງເປັນອົງການຂອງລັດຖະບານເປັນຜູ້ອອກໃຫ້ ແລະຢັ້ງຢືນວ່າ ແມ່ນຄວາມຜິດພາດຂອງວິຊາການເອງ ບໍ່ແມ່ນຕົນເປັນຜູ້ເຮັດ ຈະມາອ້າງເນື້ອທີ່ບໍ່ຄົບຕາມໃບຕາດິນແມ່ນບໍ່ຖືກຕ້ອງ, ຖ້າສານໃຫ້ຕົນສົ່ງເງິນ ຈຳນວນ 5.951.273 ບາດ (ຫ້າລ້ານເກົ້າແສນຫ້າໝື່ນໜຶ່ງພັນສອງຮ້ອຍເຈັດສິບສາມບາດ) ສະແດງວ່າໂຈດໄດ້ຂອງຕົນລາງ ເພາະເງິນສົ່ງຄືນແມ່ນກາຍເຄິ່ງ.

**ຄຳເຫັນ**

ຜ່ານການຄົ້ນຄ້ວາບັນດາຂໍ້ມູນຫຼັກຖານ ແລະ ເອກະສານຕ່າງໆຢ່າງລະອຽດຖີ່ຖ້ວນ ບົນພື້ນຖານກົດໝາຍແລ້ວ. ເຫັນວ່າ ຄຳຮ້ອງຂໍຮື້ຟື້ນຄະດີຂອງ ນາງ ບຸນທັນ (ຈຳເລີຍ) ປະຕິບັດຖືກຕ້ອງຕາມກຳນົດເວລາທີ່ບົ່ງໄວ້ໃນ ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ມາດຕາ 316.

ເຫັນວ່າ ຄຳຮ້ອງຂໍຮື້ຟື້ນຄະດີຂອງ ນາງ ບຸນທັນ (ຈຳເລີຍ) ບໍ່ມີເຫດຜົນພຽງພໍທາງດ້ານກົດໝາຍ ເນື່ອງຈາກວ່າໂດຍອີງຕາມປຶ້ມຕິດຕາມໃບແຈ້ງກຳມະສິດກ່ຽວກັບສິດນຳໃຊ້ທີ່ດິນຂອງພະນັກງານທີ່ໂຄງການອອກໃບຕາດິນ ຕາມຂາເຂົ້າເລກທີ 24, ລົງວັນທີ 23 ພະຈິກ 2015 ຂອງສານປະຊາຊົນແຂວງຫຼວງພະບາງ ແລະ ອີງຕາມໃບແຜນທີ່ດິນສະເພາະຕອນ ສະບັບລົງວັນທີ 13 ທັນວາ 2002 ຂອງໂຄງການອອກໃບຕາດິນທີ່ດິນສະເພາະຕອນ ແຂວງຫຼວງພະບາງ ຕາມຂາເຂົ້າເລກທີ 24, ລົງວັນທີ 23 ພະຈິກ 2015 ຂອງສານປະຊາຊົນແຂວງຫຼວງພະບາງ ກໍໄດ້ກຳນົດເນື້ອທີ່ພຽງ 5.868 ຕາແມັດ ໃນໄລຍະຜ່ານມາຜູ້ກ່ຽວກໍຍັງເສຍພາສີນຳໃຊ້ທີ່ດິນໃນເນື້ອທີ່ພຽງ 5.868 ຕາແມັດ ເທົ່ານັ້ນ, ແຕ່ພາຍຫຼັງທີ່ຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ ແຂວງຫຼວງພະບາງ ໄດ້ອອກໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ພັດລະບຸເນື້ອທີ່ 1 ເຮັກຕາ 5.868 ຕາແມັດ ໃຫ້ແກ່ ນາງ ບຸນທັນ (ຈຳເລີຍ) ຊຶ່ງຜູ້ກ່ຽວກໍຮັບຮູ້ວ່າທີ່ດິນຕອນດັ່ງກ່າວ ມີເນື້ອທີ່ເກີນຕົວຈິງ 1 ເຮັກຕາ ໂດຍອີງຕາມໃບເກັບເງິນຄ່ານຳໃຊ້ທີ່ດິນ ຕາມຂາເຂົ້າເລກທີ 24, ລົງວັນທີ 23

ພະຈິກ 2015 ຂອງສານປະຊາຊົນ ແຂວງຫຼວງພະບາງ ແຕ່ຜູ້ກ່ຽວກໍຍັງເມີນເສີຍບໍ່ໄດ້ມີການສະເໜີຕໍ່ການຈັດຕັ້ງບ້ານ ຫຼື ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບເພື່ອທຳການແກ້ໄຂ ແລະ ອອກໃບຕາດິນໃຫ້ຖືກຕ້ອງຕາມເນື້ອທີ່ຕົວຈິງ ທີ່ໄດ້ວັດແທກ ຕາມໃບແຜນທີ່ດິນສະເພາະຕອນ ສະບັບລົງວັນທີ 13 ທັນວາ 2002 ຂອງໂຄງການອອກໃບຕາດິນທີ່ດິນສະເພາະຕອນ ແຂວງຫຼວງພະບາງ, ອີກປະການໜຶ່ງ ໃນເວລາທີ່ໂຈດ ແລະ ຈຳເລີຍໄດ້ມີການຊື້-ຂາຍທີ່ດິນນຳກັນ ຕາມສັນຍາຊື້-ຂາຍ ສະບັບເລກທີ 01/ສດລ, ສະບັບລົງວັນທີ 08 ມັງກອນ 2012 ນັ້ນ ຈຳເລີຍກໍບໍ່ໄດ້ມີການແຈ້ງເນື້ອທີ່ດິນຕອນດັ່ງກ່າວໃຫ້ໂຈດຊາບແຕ່ຢ່າງໃດ ໂດຍມີການປິດບັງເນື້ອທີ່ດິນ 01 ເຮັກຕາ 5.868 ຕາແມັດ ຊຶ່ງມີເນື້ອທີ່ດິນຕົວຈິງພຽງແຕ່ 5.868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ຊຶ່ງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຫຼວງພະບາງ ກໍໄດ້ຢັ້ງຢືນ ສະບັບເລກທີ 205/ພຊສ, ລົງວັນທີ 02 ກຸມພາ 2016 ເນື້ອທີ່ດິນຕອນດັ່ງກ່າວຕົວຈິງມີ 5.868 ຕາແມັດ. ແຕ່ເນື່ອງຈາກວ່າ ມີການພິມຜິດ ດັ່ງນັ້ນ ໂດຍອີງຕາມມາດຕາ 18, 21 ແລະ 40 ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງປີ 2008 ແລ້ວ ເຫັນວ່າ ສັນຍາຊື້-ຂາຍ ສະບັບເລກທີ 01/ສດລ, ລົງວັນທີ 08 ມັງກອນ 2012 ລະຫວ່າງໂຈດ ແລະ ຈຳເລີຍເປັນໂມຄະບາງສ່ວນ. ສະນັ້ນ ສານຕັດສິນໃຫ້ຈຳເລີຍສົ່ງເງິນຄືນໂຈດຕາມການຄິດໄລ່ຄື ເອົາມູນຄ່າການຊື້-ຂາຍທີ່ດິນຈຳນວນ 9.600.000 ບາດ (ເກົ້າລ້ານຫົກແສນບາດ)ມາຫານໃຫ້ເນື້ອທີ່ດິນທັງສອງຕອນ 16.131 ຕາແມັດ ເທົ່າກັບ 595/ຕໍ່ 1 ຕາແມັດ ແລະ ເນື້ອທີ່ 01 ເຮັກຕາ ເທົ່າກັບ 10.000 ຕາແມັດ x 595 ບາດ/ຕໍ່ 1 ຕາແມັດ ເທົ່າກັບເງິນ ຈຳນວນ 5.951.273 ບາດ (ຫ້າລ້ານເກົ້າແສນຫ້າໝື່ນໜຶ່ງພັນສອງຮ້ອຍເຈັດສິບສາມບາດ) ແມ່ນຖືກຕ້ອງສອດຄ່ອງຕາມກົດໝາຍແລ້ວ.

ເຫັນວ່າ ຄຳພິພາກສາ ສະບັບເລກທີ 63/ລລ.ພ, ລົງວັນທີ 25 ຕຸລາ 2017 ຂອງສານປະຊາຊົນສູງສຸດ ຂັ້ນລົບລ້າງ ເປັນການຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ເຫດການຕົວຈິງຂອງຄະດີແລ້ວ.

ເຫັນວ່າ ຄຳຮ້ອງຂໍຮື້ຟື້ນຄະດີ ຂອງ ນາງ ບຸນທັນ (ຈຳເລີຍ) ບໍ່ເປັນສາເຫດໃຫ້ຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ ສະເໜີຮື້ຟື້ນຄະດີຄືນໃໝ່ ຕາມກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບ ປຸງປີ 2012 ມາດຕາ 315.

ເຫັນຕາມ ກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2017 ມາດຕາ 27, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ມາດຕາ 315, 316 ແລະ ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງປີ 2008 ມາດຕາ 18, 21 ແລະ ມາດຕາ 40.

**ດ້ວຍເຫດນີ້**

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງຕົກລົງບໍ່ຮື້ຟື້ນຄະດີ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ໄຊຊະນະ ໂຄດພູທອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

## ຈົດໝາຍບັນທຶກ
## ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

- ອີງຕາມ ມາດຕາ 16 (ໃໝ່) ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 04/ສພຊ, ລົງວັນທີ 25 ກໍລະກົດ 2008.
- ອີງຕາມ ຄຳສັ່ງ ☐ ຄຳຊີ້ຂາດ ☐ ຄຳຕັດສິນ ☑ ຄຳພິພາກສາ ☐ ຂອງສານປະຊາຊົນ ແຂວງ. ສະບັບເລກທີ 63/ລລ.ພ, ລົງວັນທີ 25/10/2017 ຂອງສານປະຊາຊົນສູງສຸດ.

**ລະຫວ່າງ:**

- ທ້າວ ເພັດຈຳພອນ ຊຸນດາລາ .......................................................................................... ໂຈດ
- ນາງ ບຸນທັນ ......................................................................................................... ຈຳເລີຍ

➢ **ກ່ຽວເລື່ອງ: ທວງເອົາເງິນຄືນ.**

ໃນວັນທີ 13/01/2020 ເວລາ 08 : 00 ໂມງທີ່: ຂະແໜງຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ ຫຼວງພະບາງ ໄດ້ມີ: ນາງ ບຸນທັນ (ຈຳເລີຍ) ເຂົ້າມາຮັບຊາບຕໍ່ກັບຄຳຕົກລົງບໍ່ຮື້ຟື້ນຄະດີ ສະບັບເລກທີ 107/ອອປສ, ລົງວັນທີ 27/11/2019 ຂອງອົງການໄອຍະການປະຊາຊົນສູງສຸດ ຈາກນັ້ນ ຕົນສະເໜີວ່າ: ຕໍ່ກັບຄຳຕົກລົງບໍ່ຮື້ຟື້ນຄະດີ ສະບັບເລກທີ 107/ອອປສ, ລົງວັນທີ 27/11/2019 ຂອງອົງການໄອຍະການປະຊາຊົນສູງສຸດ ນັ້ນຕົນ ແມ່ນເຫັນດີລໍຖ້າຕາມໜັງສືສະເໜີ ສະບັບເລກທີ 104/ຄຍປປ, ລົງວັນທີ 14/8/2019 ຂອງສະພາປະຊາຊົນແຂວງ ຫຼວງພະບາງ ກ່ອນວ່າ ຜົນອອກມາແນວໃດນັ້ນ ຕົນແມ່ນເຫັນດີປະຕິບັດທຸກຂໍ້ຄວາມ.

| **ພະນັກງານປະຕິບັດຄຳຕັດສິນ** | **ໂຈດ** | **ຈຳເລີຍ** | **ຜູ້ບັນທຶກ** |
| --- | --- | --- | --- |